# ภาคผนวก

ลิขสิทธิ์มหาวิทยาลัยเชียงใหม่
Copyright© by Chiang Mai University
All rights reserved

**ภาคผนวก ก**

**ตัวอย่างใบแจ้งโทษเลกที่ 3**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----====000====-----

ສານປະຊາຊົນ............................ ເລກທີ________/ສປຊ.......

## ໃບແຈ້ງໂທດເລກທີ 3

ກຸ່ງວກັບ.........................................................................................................

ເຊື້ອຊາດ........................................

ສັນຊາດ........................................

ອາຊີບ........................................

ວັນເດືອນປີເກີດ.........................ທີ່ເກີດບ້ານ.............................ເມືອງ.......................

☑ ນະຄອນຫຼວງວຽງຈັນ ☐ ແຂວງ.......................................................................

ປັດຈຸບັນຢູ່ໜ່ວຍ..............ບ້ານ....................................ເມືອງ...................................

☑ ນະຄອນຫຼວງວຽງຈັນ ☐ ແຂວງ.......................................................................

ເປັນລູກຂອງທ້າວ ..............................ແລະນາງ.......................................

☑ ປື້ມສຳມະໂນຄົວ ☐ ບັດປະຈຳຕົວ ☐ ບັດຕ່າງດ້າວ............................ ເລກທີ.........

ລົງວັນທີ..........................☑ ໂສດ ☐ ແຕ່ງງານ ☐ ຮ້າງ ☐ ໝ້າຍ ມີລູກຈຳນວນ..........ຄົນ

| ວັນຕັດສິນລົງໂທດ | ສານ | ຂໍ້ກ່າວຫາ | ວັນກະທຳຜິດ | ກຳນົດໂທດ | ໝາຍເຫດ |
|---|---|---|---|---|---|
| | | | | | |

ໃບແຈ້ງໂທດສະບັບນີ້ໃຊ້ໄດ້ພາຍໃນກຳນົດ 03 ເດືອນນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ

ເຫັນແລ້ວ

ປະທານສານປະຊາຊົນ

ຈັນທະລີ ດວງວິໄຊ

ໄດ້ປະເດັນຖືກຕ້ອງແລ້ວ

3 1 JAN 2007

________________, ວັນທີ........./........./.........

ຈ່າສານຄະດີອາຍາ

ຄຳພອນ ສາຍນໍລາດ

ลิขสิทธิ์มหาวิทยาลัยเชียงใหม่
Copyright © by Chiang Mai University
All rights reserved

# ภาคผนวก ข

## คำแนะนำของประธานศาลประชาชนสูงสุด

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****************

ສານປະຊາຊົນສູງສຸດ — ເລກທີ 343 /ສປສສ

ນະຄອນຫຼວງວຽງຈັນ,ວັນທີ 11 / 6 /2004

### ຄຳແນະນຳ

### ຂອງປະທານສານປະຊາຊົນສູງສຸດ

ເຖິງ : ທ່ານປະທານສານປະຊາຊົນແຂວງ, ນະຄອນ ແລະເຂດພິເສດ

ເລື່ອງ : ແນະນຳກ່ຽວກັບ ການອອກໃບແຈ້ງໂທດ ເລກທີ 3

ການອອກໃບແຈ້ງໂທດເລກທີ 3 ຂອງສານປະຊາຊົນທົ່ວປະເທດ ໃນໄລຍະຜ່ານມາສັງເກດເຫັນວ່າ ຍັງບໍ່ທັນເປັນເອກະພາບກັນເທື່ອ ເປັນຕົ້ນແມ່ນຮ່າງ, ຮູບແບບຂອງໃບແຈ້ງໂທດ,ນອກຈາກນີ້ການ ອອກໃບແຈ້ງໂທດ ກໍຍັງບໍ່ທັນເປັນລະບົບ, ເຮັດພໍໃຜພໍລາວໂດຍບໍ່ມີຫຼັກການ ແລະຂັ້ນຕອນການອອກໃບແຈ້ງໂທດ ແຕ່ຢ່າງໃດ ອັນເປັນເຫດພາໃຫ້ມີ ການຕຳນິ ແລະ ສົ່ງຂ່າວມາຍັງສານປະຊາຊົນ ຢ່າງຫຼວງຫຼາຍ, ສະນັ້ນເພື່ອເຮັດໃຫ້ ໃບແຈ້ງໂທດ ເລກທີ 3 ເປັນເອກະສານ ທີ່ມີຄຸນຄ່າ ແລະ ເປັນທີ່ເຊື່ອຖືຂອງສັງຄົມ ໃນຖານະເປັນເອກະສານທີ່ອອກໃຫ້ໂດຍ ສານປະຊາຊົນ ເພື່ອຢັ້ງຢືນເຖິງຄວາມບໍລິສຸດ ຫຼື ການຕ້ອງໂທດ ຂອງພົນລະເມືອງນັ້ນ ເນື້ອໃນ, ຮູບແບບ ແລະຮ່າງຂອງໃບແຈ້ງໂທດ ເລກທີ3 ລວມທັງຂັ້ນຕອນ, ວິທີການອອກໃບແຈ້ງໂທດ ຕ້ອງໃຫ້ມີຄວາມເປັນເອກະພາບກັນ

ສະນັ້ນ ປະທານສານປະຊາຊົນສູງສຸດ ຈຶ່ງໄດ້ອອກ ຄຳແນະນຳ ເພື່ອເປັນບ່ອນອີງ ໃນການຈັດຕັ້ງປະຕິບັດດັ່ງນີ້ :

ມາດຕາ 1 ໃບແຈ້ງໂທດເລກທີ 3

ໃບແຈ້ງໂທດເລກທີ 3 ແມ່ນເອກະສານທາງການ ທີ່ສານປະຊາຊົນ ອອກໃຫ້ບຸກຄົນໃດໜຶ່ງເພື່ອຢັ້ງຢືນ ກ່ຽວກັບສະຖານະພາບ ຂອງບຸກຄົນນັ້ນ ວ່າ ຜ່ານມາເຄີຍຖືກສານຕັດສິນລົງໂທດ ຫຼື ບໍ່



ลิขสิทธิ์มหาวิทยาลัยเชียงใหม่
Copyright by Chiang Mai University
All rights reserved

ມາດຕາ 2 ເນື້ອໃນຂອງໃບແຈ້ງໂທດເລກທີ 3

ໃບແຈ້ງໂທດເລກທີ 3 ຕ້ອງມີເນື້ອໃນດັ່ງນີ້ :

ຊື່ ຂອງສານປະຊາຊົນທີ່ອອກໃບແຈ້ງໂທດ;

ເລກທີ, ລົງວັນທີ ຂອງໃບແຈ້ງໂທດ;

ຊື່, ນາມສະກຸນ ແລະ ປະຫວັດສ່ວນຕົວ ຂອງຜູ້ຮ້ອງຂໍເອົາໃບແຈ້ງໂທດ;

ປະຫວັດການຕ້ອງໂທດ(ຖ້າຫາກມີ).

ສ່ວນເນື້ອໃນລະອຽດໄດ້ບັນຈຸໄວ້ໃນຮ່າງ ທີ່ສານປະຊາຊົນສູງສຸດ ເປັນຜູ້ກຳນົດ.

ມາດຕາ 3 ການກຳນົດຮ່າງຄຳຮ້ອງຂອງໃບແຈ້ງໂທດ

ເພື່ອຮັບປະກັນ ຄວາມເປັນເອກະພາບ ແລະ ການຄຸ້ມຄອງຢ່າງລວມສູນ ທັງເປັນການ ຫຼີກລ່ຽງ ການປອມແປງ ແລະການ ອອກໃບແຈ້ງໂທດ ແບບຊະຊາຍນັ້ນ ຮ່າງຄຳຮ້ອງ ຂໍໃບແຈ້ງໂທດຕ້ອງແມ່ນ ຮ່າງທີ່ສານປະຊາຊົນສູງສຸດ ເປັນຜູ້ກຳນົດ ແລະ ຕ້ອງມີຕາປະທັບ ຂອງກົມຄຸ້ມຄອງ - ກວດກາ ແລະ ສະຖິຕິ ຂອງສານປະຊາຊົນສູງສຸດ ເທົ່ານັ້ນ.

ມາດຕາ 4 ການເກັບຄ່າຄຳຮ້ອງ ແລະ ຄ່າທຳນຽມ ອອກໃບແຈ້ງໂທດ

ຄຳຮ້ອງຂໍເອົາໃບແຈ້ງໂທດຕ້ອງໄດ້ຕິດສະແຕມຕາມລະບຽບການ.

ຈ່າສານຕ້ອງເຮັດໃບຮັບເງິນດັ່ງນີ້ :

- ຄຳຮ້ອງ 1 ຊຸດ : 5000ກີບ;
- ຄ່າທຳນຽມ 1 ຊຸດ : 5000ກີບ;

ການນຳໃຊ້ຮອງເງິນຈຳນວນດັ່ງກ່າວໃຫ້ປະຕິບັດດັ່ງນີ:

- ສົ່ງໃຫ້ກົມກວດກາ-ຄຸ້ມຄອງ ແລະສະຕິຖິ ຂອງສານປະຊາຊົນສູງສຸດ 3000ກີບ (ສາມພັນ) ເພື່ອທົດແທນຄ່າສິ້ນເປືອງ(ນ້ຳມຶກ,ເຈ້ຍແລະພິມ);
- ຫັກໄວ້ ຄ່າທຳນຽມ 2000ກີບ ຕາມໝວດທີ V ມາດຕາ 24 ລັດຖະບັນຍັດ ຂອງປະທານປະເທດ ສະບັບລົງວັນທີ 27/11/2004;
- ຫັກຄ່າສິ້ນເປືອງ(ໃຊ້ຈ່າຍເກັບກຳຂໍ້ມູນປະຫວັດຂອງຜູ້ຮ້ອງຂໍ)ຂອງສານບ່ອນທີ່ອອກໃບແຈ້ງໂທດ 5000ກີບ(ຫ້າພັນກີບ).

ມາດຕາ 5 ສິດໃນການອອກໃບແຈ້ງໂທດ

ເພື່ອຮັບປະກັນໃຫ້ການເກັບກຳປະຫວັດການຕ້ອງໂທດຂອງພົນລະເມືອງ ມີຄວາມຖືກຕ້ອງ ແລະໃຫ້ໃບແຈ້ງໂທດ ມີຄວາມຮັດກຸມ, ຊັດເຈນ ແລະ ຈະແຈ້ງນັ້ນ ຈຶ່ງມອບໃຫ້ ສານ ປະຊາຊົນແຂວງ, ນະຄອນຫຼວງ ຫຼື ເຂດພິເສດເປັນຜູ້ມີສິດອອກໃບແຈ້ງໂທດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

ມາດຕາ 6 ກຳນົດເວລາໃນການພິຈາລະນາອອກໃບແຈ້ງໂທດ

ເມື່ອມີການຍື່ນຄຳຮ້ອງ ຂໍເອົາໃບແຈ້ງໂທດແລ້ວ ສານປະຊາຊົນທີ່ກ່ຽວຂ້ອງ ຕ້ອງພິຈາລະນາອອກໃບແຈ້ງໂທດ ພາຍໃນສອງອາທິດ ນັບແຕ່ມື້ຮັບຄຳຮ້ອງຂໍນັ້ນ ເປັນຕົ້ນໄປ.



ลิขสิทธิ์มหาวิทยาลัยเชียงใหม่
Copyright© by Chiang Mai University
All rights reserved

ມາດຕາ 7 ການພິຈາລະນາອອກໃບແຈ້ງໂທດ

ຈ່າສານ ຂອງສານປະຊາຊົນແຂວງ, ນະຄອນຫຼວງ ຫຼື ເຂດພິເສດ ທີ່ກ່ຽວຂ້ອງເປັນຜູ້ເກັບກຳ ແລະ ກວດກາ ເບິ່ງປະຫວັດການຕ້ອງໂທດ ຂອງບຸກຄົນຜູ້ທີ່ຮ້ອງຂໍເອົາໃບແຈ້ງໂທດນັ້ນ ແລ້ວສະເໜີຕໍ່ຄະນະ ປະທານສານປະຊາຊົນແຂວງ, ນະຄອນຫຼວງ ຫຼື ເຂດພິເສດ ທີ່ກ່ຽວຂ້ອງ ເພື່ອພິຈາລະນາ.

ໃນການພິຈາລະນານັ້ນ ຈ່າສານດັ່ງກ່າວຄວນພົວພັນກັບສານປະຊາຊົນບ່ອນທີ່ຜູ້ຮ້ອງຂໍເອົາໃບແຈ້ງໂທດນັ້ນອາໄສຢູ່ໃນໄລຍະຜ່ານມາ ( ຖ້າຫາກຜູ້ກ່ຽວຍ້າຍບ່ອນຢູ່ໄປມາຫຼາຍແຫ່ງ ).

ມາດຕາ 8 ຜົນບັງຄັບໃຊ້ຂອງໃບແຈ້ງໂທດ

ເພື່ອຮັບປະກັນ ໃຫ້ການຢັ້ງຢືນກ່ຽວກັບ ສະຖານະພາບຂອງບຸກຄົນໃດໜຶ່ງມີຄວາມຊັດເຈນ, ຖືກຕ້ອງ ແລະ ສອດຄ່ອງ ກັບ ຄວາມເປັນຈິງນັ້ນ ໃບແຈ້ງໂທດຈະມີຜົນໃຊ້ໄດ້ພຽງແຕ່ 3 ເດືອນ ເທົ່ານັ້ນ.

ການອອກໃບແຈ້ງໂທດ ແຕ່ລະເທື່ອຕ້ອງເກັບມ້ຽນໄວ້ ໃນສຳນວນ ຫົວຂວັ້ນ 1 ສະບັບ.

ມາດຕາ 9 ການຈັດຕັ້ງປະຕິບັດ

ໃຫ້ ສານປະຊາຊົນແຂວງ, ນະຄອນແລະ ເຂດພິເສດ ຈັດຕັ້ງປະຕິບັດ ຄຳແນະນຳສະບັບນີ້ ຢ່າງເຂັ້ມງວດ ຖ້າຫາກພົບບັນຫາຫຍຸ້ງຍາກປະການໃດ ໃຫ້ລາຍງານຕໍ່ ສານປະຊາຊົນສູງສຸດ ເພື່ອພິຈາລະນາແກ້ໄຂ.

ປະທານສານປະຊາຊົນສູງສຸດ.

ຄຳມີ ໄຊຍະວົງ



ลิขสิทธิ์มหาวิทยาลัยเชียงใหม่
Copyright by Chiang Mai University
All rights reserved

**ประวัติผู้เขียน**

| | |
|---|---|
| **ชื่อ-สกุล** | นางสาวขันทอง แก้วสว่าง |
| **วัน เดือน ปี เกิด** | 8 เมษายน 2525 |
| **ประวัติการศึกษา** | ระดับปริญญาตรี รัฐศาสตรบัณฑิต มหาวิทยาลัยแห่งชาติลาว พ.ศ. 2547 |
| **ประวัติการทำงาน** | ปัจจุบัน พนักงานวิชาการ องค์การอัยการประชาชนนครหลวงเวียงจันทร์ แผนก คดี อาญา |

ลิขสิทธิ์มหาวิทยาลัยเชียงใหม่
Copyright© by Chiang Mai University
All rights reserved